## ແຈ້ງການປະມູນ

## "ການສະໜອງປະກັນໄພສຸຂະພາບ, ປະກັນອຸປະຕິເຫດສ່ວນບຸກຄົນ ແລະປະກັນຊີວິດ"

**JSI Research & Training Institute, Inc. (JSI)** ແມ່ນອົງການສາກົນທີ່ຕັ້ງຢູ່ບອສຕັນ, ລັດແມສຊູເຊັດ, ສະຫະລັດອາເມລິກາ. **JSI** ເຮັດວຽກຢ່າງກວ້າງຂວາງກັບລັດຖະບານ ແລະ ທ້ອງຖິ່ນ, ກະຊວງສາທາລະນະສຸກ, ຜູ້ໃຫ້ບໍລິການດ້ານສຸຂະພາບ ແລະ ຊຸມຊົນເພື່ອຂະຫຍາຍການເຂົ້າເຖິງການບໍລິການສຳລັບປະຊາກອນທີ່ມີຄວາມສ່ຽງ. **JSI** ມຸ່ງໝັ້ນທີ່ຈະປັບປຸງສຸຂະພາບຂອງປະຊາກອນທີ່ດ້ອຍໂອກາດໂດຍຜ່ານວິທີການນະວັດຕະກຳໃນຫຼາຍໆຂົງເຂດສາທາລະນະສຸກ, ລວມທັງ **HIV**, ສຸຈະພາບຈະເລີນພັນ, ສຸຂະພາບແມ່ ແລະ ເດັກ, ການສ້າງຄວາມອາດສາມາດດ້ານວິຊາການ ແລະ ອົງການຈັດຕັ້ງ, ການເສີມສ້າງລະບົບຕ່ອງໂສ້ການສະໜອງ, ການຄຸ້ມຄອງຂໍ້ມູນຍຸດທະສາດ, ການຄຸ້ມຄອງລະບົບສຸຂະພາບ ແລະການພັດທະນານະໂຍບາຍ.

ໂຄງການສຸຂະພາບແມ່ ແລະ ເດັກ ແລະ ໂພຊະນາການ (**LMCHN**) ຂອງລາວ ເປັນໂຄງການທີ່ໄດ້ຮັບທຶນຈາກ **USAID** ເປັນເວລາ **5** ປີ ເພື່ອປັບປຸງຜົນໄດ້ຮັບດ້ານສຸຂະພາບແມ່ ແລະ ເດັກ ແລະ ໂພຊະນາການທີ່ເປັນບູລິມະສິດໃນປະຊາກອນທີ່ດ້ອຍໂອກາດຫຼາຍທີ່ສຸດໃນເຂດເປົ້າໝາຍຂອງລາວ. ນີ້ຈະບັນລຸໄດ້ໂດຍຜ່ານວິທີການສ້າງຄວາມເຂັ້ມແຂງລະບົບສຸຂະພາບເພື່ອຮັບປະກັນຄຸນນະພາບຂອງການບໍລິການ ແລະ ການເຂົ້າເຖິງເທົ່າທຽມກັນ.

**ຈຸດປະສົງ**

ສະຖາບັນ ຄົ້ນຄວ້າ ແລະ ຝຶກອົບຮົມ (**JSI**) ກຳລັງຊອກຫາຜູ້ສະໜອງດ້ານປະກັນໄພ ໃຫ້ຫ້ອງການ **JSI** ເຊິ່ງລວມມີ: ປະກັນໄພສຸຂະພາບ, ປະກັນໄພອຸປະຕິເຫດສ່ວນບຸກຄົນ ແລະປະກັນຊີວິດ ໃຫ້ພະນັກງານ **JSI** ແລະ ປະກັນໄພສຸຂະພາບໃຫ້ກັບຄອບສະມາຊິກຄອບຄົວຂອງພະນັກງານ **JSI** ທີ່ຂຶ້ນກັບແຂວງຜົ້ງສາລີ, ອຸດົມໄຊ, ຊຽງຂວາງ, ນະຄອນຫຼວງວຽງຈັນ, ສະຫວັນນະເຂດ, ສາລະວັນ ແລະເຊກອງ.

**ການຮັບເອົາເອກະສານປະມູນ:**

ທ່ານສາມາດສົ່ງອີເມວຜ່ານ procurement@la.jsi.com ເພື່ອລົງທະບຽນ ແລະຮັບເອົາເອກະສານປະມູນທີ່ກ່ຽວຂ້ອງ ໂດຍລະບຸຫົວຂໍ້ເອກະສານປະມູນທີ່ທ່ານຕ້ອງການ ເລີ່ມແຕ່ ວັນຈັນ, ວັນທີ **7-16 ຕຸລາ 2024**. ເອກະສານປະມູນລວມມີ:

1. RFP2024-001_ປະກັນໄພສຸຂະພາບ, ປະກັນໄພອຸປະຕິເຫດສ່ວນບຸກຄົນສຳຫຼັບພະນັກງານ
2. RFP2024-002_ປະກັນໄພສຸຂະພາບສຳຫຼັບຄອບຄົວຂອງພະນັກງານ
3. RFP2024-003_ປະກັນຊີວິດສຳຫຼັບພະນັກງານ

ການສົ່ງຊອງປະມູນ ແລະ ບັນດາເອກະສານຄັດຕິດທີ່ກ່ຽວຂ້ອງແມ່ນຈະສົ່ງທາງອີເມວໂດຍໃຊ້ແບບຟອມຂອງ **JSI**.

**ຖ້າຫາກມີຄຳຖາມ ຕ້ອງສົ່ງຄຳຖາມບໍ່ໃຫ້ກາຍ 17:00 ໂມງ ຂອງພຸດ ວັນທີ 16 ຕຸລາ 2024**

**ການສົ່ງເອກະສານປະມູນ ຕ້ອງສົ່ງບໍ່ໃຫ້ກາຍ 17:00 ໂມງ ຂອງສຸກ ວັນທີ 25 ຕຸລາ 2024**

**ທີ່ຢູ່ຫ້ອງການ JSI:**


ສະຖາບັນ ຄົ້ນຄວ້າ ແລະ ຝຶກອົບຮົມ (**JSI**)

ບ້ານສະພານທອງໃຕ້, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ

ໂທລະສັບ: (+856-21) 319 063, 319 064, 020 96779080

ອີເມວ: procurement@la.jsi.com


ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ **JSI** ອອກແບບໂຄງການ ເພື່ອໃຫ້ເປັນປະໂຫຍດຕໍ່ເດັກ ແລະ ຄອບຄົວຂອງເຂົາເຈົ້າ. ໂຄງການເຫຼົ່ານີ້, ບາງຄັ້ງອາດມີບາງກິດຈະກຳທີ່ມີຄວາມສ່ຽງຕໍ່ການລ່ວງລະເມີດ, ການກົດຂີ່ຂົ່ມເຫັງ ແລະ ການປ່ອຍປະລະເລີຍເດັກ. ສິ່ງເຫຼົ່ານີ້ ແມ່ນໜ້າທີ່ຮັບຜິດຊອບຂອງທຸກຄົນໃນການປົກປ້ອງເດັກທີ່ພວກເຮົາພົວພັນນຳໃຫ້ປອດໄພຈາກອັນຕະລາຍດັ່ງກ່າວ.